# Human Development Economic
# Week 16- Final Exam Answer Sheet
# ຂະໜານຕອບບົດສອບເສັງທ້າຍພາກ
# Final Exam

1. **ຈົ່ງອະທິບາຍ ນະໂຍບາຍ ແລະ ຍຸດທະສາດສໍາລັບການຫລຸດຜ່ອນຄວາມທຸກຍາກ?ເປົ້າຫມາຍສະຫັດສະວັດດ້ານການພັດທະນາ (MDGs) ປະກອບມີຈັກເປົ້າຫມາຍຄືເປົ້າໝາຍໃຫ້ແດ່?**

**ຕອບ(Answer):** ນະໂຍບາຍ ແລະ ຍຸດທະສາດສໍາລັບການຫລຸດຜ່ອນຄວາມທຸກຍາກນັ້ນ ມັນໄດ້ຖືກຈັດເຂົ້າເປັນວາລະສໍາຄັນທີ່ນາໆຊາດພາກັນໃຫ້ຄວາມຮ່ວມມືໃນການວາງນະໂຍບາຍເພື່ອແກ້ບັນຫາດັ່ງກ່າວ. ບັນດານະໂຍບາຍຫຼຸດຜ່ອນຄວາມທຸກຍາກດັ່ງກ່າວ ແມ່ນໄດ້ຖືກບັນຈຸໄວ້ຢູ່ໃນເປົ້າຫມາຍການພັດທະນາຂອງອົງການສະຫະປະຊາຊາດ, ນັ້ນກໍ່ຄືເປົ້າໝາຍສະຫັດສະວັດນັ້ນເອງ. ຈາກເປົ້າຫມາຍສະຫັດສະວັດທັງຫມົດ 9 ເປົ້າຫມາຍ, ມີເຖິງ 7 ເປົ້າຫມາຍທີ່ກ່ຽວຂ້ອງໂດຍກົງກັບການຫລຸດຜ່ອນຄວາມທຸກຍາກ.

**ເປົ້າຫມາຍທີ 1:**ລົບລ້າງຄວາມທຸກຍາກ ແລະ ໄພອຶດຫິວ: ແມ່ນເພື່ອຫລຸດຜ່ອນຈໍານວນປະຊາຊົນຜູ້ທຸກຍາກໃຫ້ຢູ່ໃນລະດັບ 24 % ພາຍໃນປີ 2015.

**ເປົ້າຫມາຍທີ 2:** ໃຫ້ທຸກຄົນໄດ້ຮັບການສຶກສາຢ່າງທົ່ວເຖິງ: ແມ່ນເພື່ອຮັບປະກັນວ່າພາຍໃນປີ 2015 ເດັກນ້ອຍທັງຍິງ ແລະ ຊາຍທີ່ຢູ່ໃນໄວເຂົ້າຮຽນໃນຊັ້ນປະຖົມໄດ້ເຂົ້າໂຮງຮຽນຢ່າງທົ່ວເຖິງກັນ. ນອກນັ້ນ, ຍັງຕ້ອງໄດ້ສຸມທຸກຄວາມພະຍາຍາມເພື່ອປັບປຸງຄຸນນະພາບ ແລະ ປະລິມານຂອງອຸປະກອນການສຶກສາ, ລວມທັງປັບປຸງ ຄຸນນະພາບຂອງຄູອາຈານ.

**ເປົ້າຫມາຍທີ 3:** ສົ່ງເສີມບົດບາດຍິງ-ຊາຍ: ແມ່ນຮຽກຮ້ອງໃຫ້ທຸກປະເທດຕ້ອງຮັບປະກັນວ່າເດັກຍິງສາມາດເຂົ້າເຖິງການສຶກສາໃນລະດັບເທົ່າທຽມກັບເພດຊາຍພາຍໃນປີ 2015 ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

**ເປົ້າຫມາຍທີ 4:** ຫລຸດຜ່ອນອັດຕາການຕາຍຂອງເດັກ: ແມ່ນເພື່ອຫລຸດຜ່ອນທ່າອ່ຽງການຕາຍຂອງເດັກດັ່ງກ່າວລົງໃຫ້ຍັງເຫລືອພຽງແຕ່ 55 ຄົນຕໍ່ເດັກເກີດ 1000 ຄົນພາຍໃນປີ 2015 ດ້ວຍການບໍລິການທາງການແພດທີ່ດີຂຶ້ນ ແລະ ຕ້ອງຮັບປະກັນວ່າບັນຫາຊົນເຜົ່າ ແລະ ຄວາມແຕກຕ່າງດ້ານພາສາໄດ້ຮັບການເອົາໃຈໃສ່.

**ເປົ້າຫມາຍທີ 5:** ປັບປຸງສຸຂະພາບຂອງແມ່ ມີຈຸດປະສົງເພື່ອຫລຸດຜ່ອນອັດຕາການຕາຍຂອງແມ່ໃຫ້ເຫລືອພຽງ ແຕ່ 185 ຄົນຕໍ່ເດັກເກີດມີຊີວິດ 100.000 ຄົນໃນປີ 2015.

**ເປົ້າຫມາຍທີ 6:** ຕ້ານກັບພະຍາດ HIV/AIDS, ມາລາເລຍ ແລະ ເຊື້ອພະຍາດອື່ນໆໃຫ້ຫລຸດລົງເຄິ່ງຫນຶ່ງພາຍໃນປີ 2015.

**ເປົ້າຫມາຍທີ 7:** ຮັບປະກັນຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແນໃສ່ເພື່ອການຈັດຕັ້ງປະຕິບັດບັນດາຫລັກການພື້ນຖານຂອງການພັດທະນາແບບຍືນຍົງ ແລະ ປົກປັກຮັກສາຊັບພະຍາກອນທໍາມະຊາດ.

**ເປົ້າຫມາຍທີ 8:** ສ້າງຄູ່ຮ່ວມມືແຫ່ງການພັດທະນາທົ່ວໂລກ.

**ເປົ້າຫມາຍທີ 9:** ຫລຸດຜ່ອນຜົນກະທົບຂອງລະເບີດທີ່ຍັງບໍ່ທັນແຕກໃນລາວ ເຊິ່ງເປົ້າໝາຍແມ່ນການເພີ່ມ ເນື້ອທີ່ທີ່ສໍາເລັດການເກັບກູ້ລະເບີດບໍ່ທັນແຕກໃຫ້ໄດ້ 20,000 ເຮັກຕາ ແລະ ຫລຸດຜ່ອນການບາດເຈັບ ຫລື ເສຍຊີວິດຈາກລະເບີດທີ່ບໍ່ທັນແຕກໃຫ້ຕໍ່າກວ່າ 75 ກໍລະນີຕໍ່ປີ ໃນປີ 2015.

**2. ຈົ່ງໃຫ້ຄວາມໝາຍຂອງແຮງງານ ? ຈົ່ງອະທິບາຍບັນຫາແຮງງານ ແລະ ກົນໄກການແກ້ໄຂບັນຫາແຮງງານໃນລະບົບເສດຖະກິດ ມີຄືແນວໃດ?**

**<u>ຕອບ (Answer):</u>** ແຮງງານແມ່ນຊັບພະຍາກອນມະນຸດ. ສະນັ້ນ, ຄໍາວ່າ "ແຮງງານ" ຈຶ່ງໝາຍເຖິງກ□າລັງກາຍ, ສະຕິປັນຍາ ແລະ ຄວາມຊໍານິຊໍານານຂອງມະນຸດ. ຄໍາວ່າ "ແຮງງານ" (Labor) ບາງຄັ້ງໄດ້ອະທິບາຍຄວາມໝາຍສະເພາະວັດຖຸປະສົງໃດໜຶ່ງເຊັ່ນວ່າ: "ຊົນຊັ້ນກໍາມະກອນ" ເຊິ່ງໝາຍເຖິງສະເພາະບຸກຄົນທີ່ສະເໜີຂາຍແຮງງານໃຫ້ແກ່ບຸກຄົນອື່ນ ຫຼື ອົງກອນທຸລະກິດໃດໜຶ່ງ

ບັນຫາກ່ຽວກັບແຮງງານມີຢ່າງຫຼວງຫຼາຍ, ແຕ່ວ່າບັນຫາແຮງງານ ທີ່ເສດຖະສາດນໍາມາສຶກສາເປັນປັດໃຈຕົ້ນຕໍໄດ້ແກ່:

-ການຫວ່າງງານ

-ການປະຕິບັດການຂອງຕະຫຼາດແຮງງານ

-ສີມືແຮງງານ

-ການກໍານົດຄ່າຈ້າງງານ

-ການຄຸ້ມຄອງຄວາມປອດໄພຂອງການເຮັດວຽກໃຫ້ແກ່ຄົນງານ

**ກົນໄກການແກ້ໄຂບັນຫາແຮງງານໃນລະບົບເສດຖະກິດ ມີຄື:**

**ກົນໄກຕະຫລາດ:**

- **ດ້ານຕັ້ງຫນ້າ**: ການກໍານົດຄ່າຈ້າງໃນຫນ່ວຍທຸລະກິດແຕກຕ່າງກັນຕາມພາລະຫນ້າທີ່ ແລະ ຄວາມສາມາດຂອງຜູ້ຂາຍແຮງງານ, ການກໍານົດຄ່າຈ້າງເປັນເຄື່ອງມືໃນການຈັດແຈງແຮງງານແຕ່ລະປະເພດ ແລະ ການແຈກຢາຍແຮງງານໃນລະບົບ: ເສດຖະກິດ.
- **ດ້ານຫຍໍ້ທໍ້**: ເກີດການເອົາລັດເອົາປຽບກັນລະຫວ່າງນາຍຈ້າງ ກັບ ລູກຈ້າງ, ການໃຊ້ແຮງງານຟຸມເຟືອຍ ແລະ ມີການຫວ່າງງານຢ່າງຊໍ້າເຮື້ອ.

**ກົນໄກບໍລິຫານ.**

- **ດ້ານຕັ້ງຫນ້າ**: ຈັດແຈງວຽກເຮັດງານທໍາໃຫ້ທຸກຄົນໃນສັງຄົມ ແລະ ບໍ່ມີການຫວ່າງງານ, ພ້ອມກັນນັ້ນ, ສິດ ແລະ ພັນທະຂອງຊາວຜູ້ອອກແຮງງານຖືກຄໍ້າປະກັນດ້ວຍລັດ.
- **ດ້ານຫຍໍ້ທໍ້**: ການສະຫນອງແຮງງານບໍ່ມີລັກສະນະແຂ່ງຂັນ ແລະ ຂາດປະສິດທິພາບ, ອັນເກີດມາ ຈາກແຮງງານບໍ່ໄດ້ຜ່ານການຄັດເລືອກ. ໃນສະພາບການແຂ່ງຂັນຂອງຕະຫລາດ, ກົນໄກທັງສອງມີຄວາມຜູກພັນພາວະວິໄສ.

**3. ຈົ່ງອະທິບາຍລັກສະນະອຸປະທານຂອງແຮງງານໃນໄລຍະສັ້ນ ແລະ ໄລຍະຍາວ?**

**<u>ຕອບ (Answer):</u> ເສັ້ນອຸປະທານໃນໄລຍະສັ້ນ :** ເປັນເສັ້ນທີ່ສະແດງເຖິງຄວາມສໍາພັນລະຫວ່າງອັດຕາຄ່າຈ້າງ ກັບປະລິມານການສະເໜີຂາຍແຮງງານ ຊຶ່ງຈະປ່ຽນແປງໄປໃນທິດທາງດຽວກັນຄື: ຖ້າອັດຕາຄ່າຈ້າງສູງຂຶ້ນປະລິມານການສະເໜີຂາຍແຮງງານ ຫຼື ອຸປະທານຂອງແຮງງານຈະຫຼຸດລົງ

**ເສັ້ນອຸປະທານຂອງແຮງງານໃນໄລຍະຍາວ :** ເສັ້ນນີ້ມີລັກສະນະດຽວກັນກັບເສັ້ນອຸປະທານຂອງແຮງງານໃນໄລຍະສັ້ນ ແຕ່ມີຄວາມຫືດຢືດຫຼາຍກວ່າໃນໄລຍະສັ້ນ ເພາະໃນໄລຍະຍາວມີການປ່ຽນແປງສິ່ງຕ່າງໆເຊັ່ນ: ການຝຶກອົບຮົມແຮງງານນ, ການເພີ່ມຂຶ້ນຂອງປະຊາກອນ, ການເຄື່ອນຍ້າຍແຮງງານ ເປັນຕົ້ນ.

**4. ບົດບາດ ແລະ ຄວາມສາຄັນຂອງການຝຶກອົບຮົມ ແລະ ການພັດທະນາກາລັງແຮງງານ ມີຄືແນວໃດ?**

**ຕອບ (Answer):** ການຝຶກອົບຮົມ ແລະ ການພັດທະນາກຳລັງແຮງງານແມ່ນການລົງທຶນທີ່ສຳຄັນທີ່ສຸດສຳລັບອະນາຄົດ. ມັນບໍ່ພຽງແຕ່ຊ່ວຍພັດທະນາບຸກຄົນ, ອົງກອນ ແລະ ປະເທດຊາດເທົ່ານັ້ນ, ແຕ່ຍັງສ້າງຮາກຖານທີ່ແຂງແຮງສຳລັບການພັດທະນາທີ່ຍືນຍົງ ແລະ ການແຂ່ງຂັນໃນຍຸກໂລກາພິວັດ.

ສຳລັບ ສປປ ລາວ, ການໃຫ້ຄວາມສຳຄັນກັບການພັດທະນາແຮງງານຈະເປັນກຸນແຈສຳຄັນໃນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ແລະ ການຫຼຸດພົ້ນຈາກການເປັນປະເທດດ້ອຍພັດທະນາພາຍໃນປີ 2026.

**5. ຕະຫຼາດແຮງງານໝາຍເຖິງຫຍັງ? ຈົ່ງອະທິບາຍໜ້າທີ່ຂອງຕະຫຼາດແຮງງານມີຄືແນວໃດ?**

**ຕອບ (Answer):** ຕະຫຼາດແຮງງານ ເປັນແຫຼ່ງທີ່ນາຍຈ້າງຈະໄປຫາຄົນງານ ແລະ ຄົນງານຈະໄປຫາວຽກເຮັດງານທຳ ຫຼື ເວົ້າໄດ້ອີກຢ່າງ ຄືແຫຼ່ງທີ່ນາຍຈ້າງ ແລະ ຄົນງານຈະພົບກັນໄດ້ ເພື່ອຈະໄດ້ຕົກລົງເຮັດສັນຍາເຂົ້າເຮັດວຽກໂດຍນາຍຈ້າງໄດ້ຮັບບໍລິການຈາກຄົນງານ ແລະ ຄົນງານໄດ້ຮັບຄ່າຈ້າງເປັນຜົນຕອບແທນຈາກການຂາຍແຮງງານ ຖ້າເບິ່ງໃນແງ່ວິຊາການຕະຫຼາດແຮງງານ ກໍ່ຄືແຫຼ່ງທີ່ກໍ່ໃຫ້ເກີດອຸປະສົງ ແລະ ອຸປະທານຂອງແຮງງານນັ້ນເອງ,

ໜ້າທີ່ຂອງຕະຫຼາດແຮງງານ ຄືການເຮັດໃຫ້ແຮງງານກັບຕຳແໜ່ງງານວ່າງມີຄວາມສອດຄ່ອງກັນ ຊຶ່ງຄວາມຈິງແລ້ວແຮງງານກັບຕຳແໜ່ງງານວ່າງບໍ່ສອດຄ່ອງກັນໄດ້ໂດຍງ່າຍ ການຊອກຫາວຽກເຮັດງານທຳຂອງຄົນງານ ແລະ ການຫາຄົນມາບັນຈຸເຂົ້າໃນງານເປັນເລື່ອງທີ່ຊັບຊ້ອນ ທັ້ງນີ້ອາດມີສາເຫດມາຈາກການຂາດຂ່າວສານກ່ຽວກັບຕະຫຼາດແຮງງານ ຫຼື ແຮງງານມີຄຸນສົມບັດທີ່ບໍ່ເໝາະສົມກັບຕຳແໜ່ງງານທີ່ວ່າງຢູ່ ເພື່ອທີ່ຈະເປັນແນວທາງໃນການພັດທະນາກຳລັງຄົນໃຫ້ມີຄຸນະພາບດີຂຶ້ນ ແລະ ປັບປຸງທາງດ້ານຂ່າວສານກ່ຽວກັບຕະຫຼາດແຮງງານ ຊຶ່ງຈະເຮັດໃຫ້ແຮງງານກັບຕຳແໜ່ງງານວ່າງມີຄວາມສອດຄ່ອງກັນໄດ້ດີຂຶ້ນ.

**6. ການຈ້າງງານ ແລະ ການຫວ່າງງານມີຄວາມເຊື່ອມໂຍງກັບການພັດທະນາຊັບພະຍາກອນມະນຸດ ຄືແນວໃດ?**

**ຕອບ (Answer):** ການຈ້າງງານ ແລະ ການຫວ່າງງານມີຄວາມເຊື່ອມໂຍງຢ່າງເລິກເຊິ່ງກັບການພັດທະນາຊັບພະຍາກອນມະນຸດ ແລະ ເສດຖະກິດ:

**1. ການນຳໃຊ້ຊັບພະຍາກອນມະນຸດ**

- ການຈ້າງງານທີ່ດີ = ການນຳໃຊ້ທັກສະ ແລະ ຄວາມຮູ້ຂອງປະຊາຊົນຢ່າງເຕັມທີ່
- ການຫວ່າງງານ = ການເສຍເປົ່າຊັບພະຍາກອນມະນຸດທີ່ມີທ່າແຮງ
- ຖ້າປະຊາຊົນບໍ່ໄດ້ເຮັດວຽກ, ການລົງທຶນດ້ານການສຶກສາ-ຝຶກອົບຮົມກໍ່ບໍ່ເກີດປະໂຫຍດ

**2. ວົງຈອນການພັດທະນາ**

- ການຈ້າງງານສູງ → ລາຍໄດ້ເພີ່ມ → ການບໍລິໂພກເພີ່ມ → ເສດລະກິດຂະຫຍາຍຕົວ
- ມີທຶນລົງທຶນໃນການສຶກສາ-ສຸຂະພາບ → ຄຸນນະພາບຊັບພະຍາກອນມະນຸດດີຂຶ້ນ
  ການຫວ່າງງານສູງ → ຄວາມທຸກຍາກເພີ່ມ → ບໍ່ສາມາດພັດທະນາຕົນເອງໄດ້